

## ຂ້າພະເຈົ້າຈະຕິດຕໍ່ຫາໃຜຖ້າຫາກວ່າຂ້າພະເຈົ້າມີຄວາມ ຫ່ວງໄຍກ່ຽວກັບເອກສານຂອງຂ້າພະເຈົ້າຊຶ່ງບໍ່ສາມາດຖືກ ແກ້ໄຂໄດ້ນຳພະນັກງານຊ່ວຍເຫລືອ **FVS** ຂອງຂ້າພະເຈົ້າ?

ຖ້າຫາກວ່າທ່ານມີຄຳຮ້ອງທຸກ ຫລື ຄວາມຫ່ວງໄຍກ່ຽວກັບ ວ່າເອກສານຂອງທ່ານຖືກກຳແນວໃດ, ໂທຫາຜູ້ຄວບຄຸມ ງານຂອງພະນັກງານຊ່ວຍເຫລືອ FVS ຂອງທ່ານ. ຖ້າຫາກ ວ່າຄວາມຫ່ວງໄຍຂອງທ່ານຍັງບໍ່ຖືກແກ້ໄຂໄດ້ເທື່ອ, ທ່ານສາ ມາດໂທຫາຜູ້ບໍຣິຫານເຂດ.

- *ທ່ານຍັງຈະໂທຫາໄດ້ອີກຄືກັນໄປຫາ **Office of Constituent Relations** ໄດ້ທີ່ເລກ **800-723-4831** ຫລື **360-902-8060** ເພື່ອຄວາມຊ່ວຍເຫລືອໃນທຸກໆເວລາ, ຫລື ທ່ານຈະໂທຫາຫ້ອງການ **Office of the Family and Children's Ombuds** ໄດ້ທີ່ເລກ **800-571-7321**.*

*ຫ້ອງການ **Ombuds** ຮັບເອົາຄວາມຫ່ວງໄຍ ແລະ ຄຳຮ້ອງທຸກ ກ່ຽວກັບກິຈກັມຂອງກົມ **Department of Children, Youth, and Families**. ເຂົາເຈົ້າມີສິດອຳນາດທີ່ຈະສືບສວນ ຄວາມຫ່ວງໄຍ.*

Washington State Department of
CHILDREN, YOUTH & FAMILIES

DCYF 22-1751 LA (1/19) Laotian

# ການບໍຣິການ ຄອບຄົວຕາມ ສະມັກໃຈ

## *ຮັກສາເດັກນ້ອຍໃຫ້ປອດພັຍ ໃນຂະນະທີ່ເຮັດໃຫ້ຄອບຄົວ ເຂັ້ມແຂງຂຶ້ນ*



## ການບໍລິການຄອບຄົວຕາມສະມັກໃຈ (FVS) ແມ່ນຫຍັງ?

FVS ເປັນໂຄງການທີ່ປ່ອຍໃຫ້ພໍ່ແມ່ເລືອກເອົາທີ່ຈະເຂົ້າຮ່ວມໃນການບໍລິການທີ່ຕອບສະໜອງຄວາມຕ້ອງການຂອງຄວາມປອດພັຍ, ສຸຂະພາບ ແລະ ຄວາມຢູ່ດີມີແຮງຂອງເດັກນ້ອຍຂອງເຂົາເຈົ້າ.

ເປົ້າຫມາຍຂອງ FVS ແມ່ນເພື່ອຈະຮັກສາເດັກນ້ອຍໃຫ້ປອດພັຍ ແລະ ຕອບສະໜອງຄວາມຕ້ອງການຂອງເຂົາເຈົ້າໃນຂະນະທີ່ເຮັດໃຫ້ເຂັ້ມແຂງ ແລະ ຮັກສາຄອບຄົວຢູ່ນຳກັນ. ໃນທຸກໆເວລາທ່ານຈະເລືອກເອົາທີ່ຈະຢຸດເຮັດວຽກນຳ FVS. ຖ້າຫາກວ່າທ່ານເລືອກທີ່ຈະຢຸດການບໍລິການຂອງ FVS, Department of Children, Youth, and Families (DCYF) ຈະຕີຣາຄາປະເມີນຜົນເບິ່ງຣະດັບຂອງຄວາມປອດພັຍ ແລະ ການສ່ຽງອັນຕະຣາຍ ແລະ ຕັດສິນວ່າຈະປິດເອກສານ ຫລື ຍື່ນການຟ້ອງຂຶ້ນສານເຣື່ອງການຫວັງເພິ່ງ.



## ຈະຄາດຫວັງແນວໃດແດ່ຈາກພະນັກງານຊ່ວຍເຫລືອ FVS ຂອງທ່ານ

- ທີ່ຈະເຮັດນຳທ່ານ ແລະ ເດັກນ້ອຍຂອງທ່ານດ້ວຍຄວາມນັບຖື.
- ທີ່ຈະເຮັດວຽກນຳທ່ານ ແລະ ເຮັດແຜນການທີ່ຈະຮັກສາເດັກນ້ອຍຂອງທ່ານໃຫ້ປອດພັຍ ແລະ ເຮັດໃຫ້ແນ່ໃຈວ່າເດັກນ້ອຍຂອງທ່ານມີສິ່ງທີ່ເຂົາເຈົ້າຕ້ອງການ.
- ທີ່ຈະເອື້ອເຟື້ອການບໍລິການທີ່ເຈາະຈົງຕໍ່ທ່ານ ແລະ ຄອບຄົວຂອງທ່ານ.
- ທີ່ຈະພົບກັບເດັກນ້ອຍຂອງທ່ານເປັນການສ່ວນຕົວຢູ່ໃນເຮືອນ
- ຂອງທ່ານນຶ່ງຫາສອງເທື່ອຕໍ່ເດືອນ.ທີ່ຈະພົບກັບທ່ານຢ່າງຫນ້ອຍເດືອນນຶ່ງເທື່ອນຶ່ງຢູ່ໃນເຮືອນຂອງທ່ານ, ຖືກແຈ້ງບອກ ຫລື ບໍ່ຖືກແຈ້ງບອກ, ເພື່ອຈະເວົ້າລົມກັນກ່ຽວກັບຄວາມຄືບຫນ້າ ແລະ ສິ່ງກີດກັ້ນ.
- ທີ່ຈະຕິດຕໍ່ຫາຜູ້ໃຫ້ການບໍລິການ, ເພື່ອນຮ່ວມງານຢູ່ໃນຊຸມນຸມຊົນ, ຄອບຄົວ ແລະ ຫມູ່ເພື່ອນ (ດ້ວຍຄຳອະນຸຍາດຂອງທ່ານ) ເພື່ອຈະຊອກເອົາຄວາມຄິດເຫັນຈາກຂ້າງນອກກ່ຽວກັບຜົນຄືບຫນ້າຂອງທ່ານ ແລະ ຄອບຄົວຂອງທ່ານ.
- ທີ່ຈະເວົ້ານຳທ່ານກ່ຽວກັບຄວາມຮຸນແຮງຢູ່ໃນຄອບຄົວແລະ ສ່ວນປະກອບຂອງການສ່ຽງອັນຕະຣາຍຢູ່ໃນຄອບຄົວຂອງທ່ານ.
- ທີ່ຈະໃຫ້ການສຶກສາແກ່ທ່ານກ່ຽວກັບຄວາມປອດພັຍຂອງເດັກທາຣົກຖ້າຫາກວ່າມັນກ່ຽວຂ້ອງນຳ.
- ຖ້າຫາກວ່າເດັກນ້ອຍຂອງທ່ານໄດ້ຖືກສົງສັຍວ່າຖືກສວຍໂອກາດທາງເພດເປັນການຄ້າຂາຍ, ທີ່ຈະເຮັດການຕີຣາຄາປະເມີນຜົນໃຫ້ສຳເຣັດ ແລະ ສະເນີການບໍລິການທີ່ຈະຊ່ວຍເຫລືອໄດ້.

## ພະນັກງານຊ່ວຍເຫລືອ FVS ຂອງທ່ານຈະຄາດຫວັງແນວໃດແດ່ຈາກທ່ານ

- ທີ່ຈະເຂົ້າຮ່ວມໃນການດຳເນີນການຕີຣາຄາປະເມີນຜົນແລະ ຊ່ວຍອອກແບບແຜນການເພື່ອຈະຮັກສາເດັກນ້ອຍຂອງທ່ານໃຫ້ປອດພັຍ.
- ທີ່ຈະປະຕິບັດຕາມແຜນການຄວາມປອດພັຍ (ຖ້າຫາກວ່າທ່ານມີອັນນຶ່ງ) .
- ທີ່ຈະເຂົ້າຮ່ວມໃນການບໍລິການເພື່ອຈະຮັກສາເດັກນ້ອຍຂອງທ່ານໃຫ້ປອດພັຍ ແລະ ລຸດຜ່ອນການສ່ຽງຕໍ່ການກົດຂີ່ຂົ່ມເຫັງ ຫລື ການປ່ອຍປະລະເລີຍ.
- ທີ່ຈະອະນຸຍາດໃຫ້ພະນັກງານຊ່ວຍເຫລືອ FVS ທີ່ຈະພົບກັບ ເດັກນ້ອຍຂອງທ່ານເປັນການສ່ວນຕົວ.
- ທີ່ຈະພົບກັບພະນັກງານຊ່ວຍເຫລືອ FVS ເປັນປົກກະຕິ.
- ທີ່ຈະຮັກສາໃຫ້ພະນັກງານຊ່ວຍເຫລືອ FVS ຖືກແຈ້ງໃຫ້ຊາບຕະລອດໄປກ່ຽວກັບການປ່ຽນແປງຕ່າງໆຢູ່ໃນສະພາບການ
- ຂອງທ່ານ.ທີ່ຈະເຊັນຊື່ໃບອະນຸຍາດໃຫ້ປ່ອຍຣາຍຣະອຽດສຳລັບທ່ານແລະເດັກນ້ອຍຂອງທ່ານ
- ເຮັດໃຫ້ແນ່ໃຈດ້ວຍຄວາມນັບຖືວ່າພະນັກງານຊ່ວຍເຫລືອເຂົ້າໃຈສະພາບການຂອງຄອບຄົວຂອງທ່ານ, ຄວາມຕ້ອງການ, ແລະ ສະພາບແວດລ້ອມ.



## *FVS ເຮັດວຽກແນວໃດ?*

FVS ຈະຖືກເອື້ອເຟື້ອໃຫ້ຖ້າຫາກວ່າຜະແນກ DCYF ສືບສວນຄອບຄົວຂອງທ່ານສຳລັບການກ່າວຫາໃນການກົດຂີ່ຂົ່ມເຫັງເດັກນ້ອຍ, ການປ່ອຍປະລະເລີຍ ຫລື ການປະພຶດທີ່ມີການສ່ຽງອັນຕະຣາຍສູງ ແລະ:

- ມັນມີຄວາມຫ່ວງໄຍສຳລັບການກົດຂີ່ຂົ່ມເຫັງ ຫລື ການປ່ອຍປະລະເລີຍໃນອະນາຄົດ ຫລື
- ມັນມີຄວາມຫ່ວງໄຍໃນຄວາມປອດພັຍປັດຈຸບັນສຳລັບເດັກນ້ອຍຂອງທ່ານ.

ຄອບຄົວຍັງອາດຈະຮ້ອງຂໍເອົາການບໍລິການ FVS ໃດ້ອີກຄືກັນໃນເວລາທີ່ຕ້ອງການໂດຍການໂທຫາ DCYF.